ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະປ່າໄມ້

ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ເລກທີ 011 /ກພປຊ.

ນະຄອນຫຼວງວຽງຈັນ, ວັນທີ 12 OCT 2009

# ກົດລະບຽບ

## ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

- ອີງຕາມດຳລັດ ສະບັບ ເລກທີ 38/ ນຍ, ລົງວັນທີ 21 ກຸມພາ 2005 ວ່າດ້ວຍກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້.
- ອີງຕາມ ການຕົກລົງເປັນເອກະພາບໃນກອງປະຊຸມ ສະພາບໍລິຫານກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາ ກອນປ່າໄມ້ ຄັ້ງວັນທີ 28 ສິງຫາ 2009

**ປະທານ ສະພາບໍລິຫານກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ອອກກົດລະບຽບ :**

## ໝວດທີ I

## ຈຸດປະສົງ ແລະ ເປົ້າໝາຍ

ມາດຕາ 1 ກົດລະບຽບສະບັບນີ້ ວາງອອກເພື່ອກຳນົດ ຫຼັກການການເຄື່ອນໄຫວ, ການຂົນຂວາຍລະດົມ ທຶນ, ການ ຄຸ້ມຄອງນຳໃຊ້ ແລະ ການຕິດຕາມ ກວດກາ ກອງທຶນ ເພື່ອໃຫ້ສອດຄ່ອງ ກັບລະບຽບການ ແລະ ກົດໝາຍຂອງ ສປປ ລາວ ແນໃສ່ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ສ້າງ ຄວາມໝັ້ນໃຈໃຫ້ຜູ້ປະກອບທຶນເຂົ້າ ກອງທຶນ ກພປຊ.

ມາດຕາ 2 ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນກອງທຶນ ທີ່ຖືກສ້າງຕັ້ງຂຶ້ນຕາມດຳລັດ ສະບັບ ເລທີ 38/ນຍ, ລົງວັນທີ 21 ກຸມພາ 2005 ຊຶ່ງມີຊື່ ຫຍໍ້ເປັນພາສາລາວວ່າ : ກພປຊ ແລະ ພາສາອັງກິດ ວ່າ : Forestry and Forest Resource Development Fund ມີຊື່ຫຍໍ້ວ່າ FRDF ຊຶ່ງມີຫ້ອງການ ຕັ້ງຢູ່ ກົມປ່າໄມ້, ກະຊວງ ກະສິກຳ ແລະ ປ່າໄມ້.

## ໝວດທີ II

## ໂຄງປະກອບການຈັດຕັ້ງ, ສິດ ແລະ ໜ້າທີ່ ຂອງ ສະພາບໍລິຫານ ແລະ ກອງເລຂາ ກອງທຶນ ກພປຊ

ມາດຕາ 3 ສະພາບໍລິຫານກອງທຶນ ປະກອບມີ 07 ທ່ານ : ປະທານ 01 ທ່ານ, ຮອງປະທານ 02 ທ່ານ ແລະ ສະມາ ຊິກ 04 ທ່ານ ໂດຍໄດ້ຮັບການແຕ່ງຕັ້ງ ຈາກນາຍົກລັດຖະມົນຕີ ຕາມທີ່ໄດ້ກຳນົດໄວ້ ໃນ ມາດຕາ 8 ແລະ 9 ຂອງດຳລັດ ສະບັບເລກທີ 38/ນຍ, ລົງວັນທີ 21 ກຸມພາ 2005 ຊຶ່ງມີ ອາຍຸ ການດຳເນີນງານສະໄໝລະ 3 ປີ

ມາດຕາ 4 ສະພາບໍລິຫານກອງທຶນ ເປີດປະຊຸມສະໄໝສາມັນ [illegible] ຕາມເດືອນ ມີນາ ແລະ ກັນຍາ ໂດຍແຈ້ງໃຫ້ສະມາຊິກ ທຸກທ່ານ ຊາບລ່ວງໜ້າເປັນທາງການ ຢ່າງໜ້ອຍ 15 ວັນ ກອງປະຊຸມວິສາມັນສາມາດເປີດຂຶ້ນໄດ້ ເພື່ອແກ້ໄຂວຽກງານອັນຮີບດ່ວນຕາມການຮຽກປະຊຸມ ຂອງປະທານສະພາບໍລິຫານ ກອງທຶນ ກອງປະຊຸມແຕ່ລະຄັ້ງຕ້ອງມີສະມາຊິກເຂົ້າຮ່ວມ ຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງໝົດ ຈຶ່ງສາມາດຜ່ານວຽກງານ ຂອງສະພາບໍລິຫານກອງທຶນໄດ້ການຕັດສິນບັນຫາຕ້ອງອີງໃສ່ສຽງສ່ວນຫຼາຍ ແຕ່ກໍລະນີມີສຽງເທົ່າກັນໃຫ້ຖືເອົາສຽງ ຂອງປະທານ ເປັນອັນຊີ້ຂາດ.

ມາດຕາ 5 ສະມາຊິກ ຂອງສະພາບໍລິຫານກອງທຶນ ຜູ້ໃດໜຶ່ງບໍ່ສາມາດ ເຂົ້າຮ່ວມປະຊຸມສະພາບໍລິຫານກອງທຶນ ຜູ້ກ່ຽວຕ້ອງແຈ້ງ ເປັນລາຍລັກອັກສອນ ໃຫ້ກອງເລຂາກອງທຶນຊາບລ່ວງໜ້າ 03 ວັນ

ມາດຕາ 6 ສະມາຊິກ ຂອງສະພາບໍລິຫານກອງທຶນ ຈະສິ້ນສຸດໜ້າທີ່ກໍ່ຕໍ່ເມື່ອ:

- ຖືກແຕ່ງຕັ້ງໄປເຮັດໜ້າທີ່ໃໝ່
- ສິ້ນສຸດວາລະຂອງການດຳເນີນວຽກງານ
- ຖືກປະຕິບັດວິໄນ
- ມີບັນຫາທາງດ້ານສຸກຂະພາບ ຊຶ່ງ ບໍ່ສາມາດສືບຕໍ່ປະຕິບັດໜ້າທີ່ຂອງຕົນໄດ້
- ເສຍຊີວິດ .

ມາດຕາ 7 ສະມາຊິກ ຂອງສະພາບໍລິຫານກອງທຶນ ບໍ່ມີເງິນເດືອນຈາກຕຳແໜ່ງ ແຕ່ຈະໄດ້ຮັບອັດຕາກິນ ເມື່ອເວລາເຂົ້າຮ່ວມກອງປະຊຸມ ຂອງສະພາບໍລິຫານກອງທຶນ ຕາມລະບຽບການທີ່ວາງອອກ.

ມາດຕາ 8 ສິດ ແລະ ໜ້າທີ່ຂອງ ສະພາບໍລິຫານກອງທຶນ

8.1 ຮັບຮອງລະບຽບການ ພາຍໃນ, ແຜນການ ແລະ ອະນຸມັດການນຳໃຊ້ເງິນກອງທຶນ

8.2 ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຫົວໜ້າກອງເລຂາ ແລະ ພະນັກງານຊ່ວຍວຽກໃນກອງເລຂາ

8.3 ຊີ້ນຳ, ຕິດຕາມ ກວດກາ ແລະ ຕີລາຄາການປະຕິບັດວຽກງານ ຂອງກອງເລຂາ

8.4 ລະດົມທຶນ ແລະ ຄາດຄະເນຄວາມອາດສາມາດໃນການລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອ ເປັນພື້ນຖານໃນການສ້າງແຜນການລົງທຶນ ແລະ ດຳເນີນການໂຄສະນາ ເພື່ອ ແຈ້ງສະພາບກ່ຽວກັບ ຄວາມຕ້ອງການຂອງວຽກງານ ກ່ຽວກັບການພັດທະນາ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ບົດບາດຄວາມຮັບຜິດຊອບຂອງກອງທຶນ.

8.5 ຮຽກປະຊຸມ ສະໄໝສາມັນ ແລະ ວິສາມັນ ຂອງສະພາບໍລິຫານກອງທຶນ

8.6 ຕິດຕາມກວດກາ ແລະ ປະເມີນຜົນການຄຸ້ມຄອງນຳໃຊ້ເງິນກອງທຶນ ປະຕິບັດຕາມລະບຽບການພາຍໃນ ກ່ຽວກັບການເຄື່ອນໄຫວ ຂອງສະພາບໍລິຫານກອງທຶນ

8.7 ຮັບຜິດຊອບຕໍ່ຜົນສຳເລັດ ແລະ ຂໍ້ຄົງຄ້າງ ທີ່ຂາດຕົກບົກພ່ອງໃນການຄຸ້ມຄອງ ບໍລິຫານ ວຽກງານກອງທຶນ ກພປຊ. ນັບແຕ່ສູນກາງ ຮອດທ້ອງຖິ່ນ.

8.8 ລາຍງານກ່ຽວກັບການ ເຄື່ອນໄຫວວຽກງານຂອງຕົນປະຈຳງວດ 3 ເດືອນ 6 ເດືອນ 9 ເດືອນ ແລະ ສົກປີ ຕໍ່ນາຍົກລັດຖະມົນຕີ

8.9 ພິຈາລະນາ ຜົນການກວດສອບຂອງອົງການກວດສອບບັນຊີຈາກພາຍນອກ.

ມາດຕາ 9 ກອງເລຂາກອງທຶນແມ່ນ ກົງຈັກການຈັດຕັ້ງໜຶ່ງ ທີ່ເປັນເສນາທິການ ໃຫ້ແກ່ສະພາບໍລິຫານກອງທຶນ ຊຶ່ງຢູ່ພາຍໃຕ້ການຊີ້ນຳໂດຍກົງ ຂອງປະທານ, ມີພະນັກງານຊ່ວຍວຽກຈຳນວນໜຶ່ງ ແລະ ໂດຍ

ໂຄງການ [illegible] ແລະ [illegible]
ວັນຕາມການມອບໝາຍ

ມາດຕາ 10 ກອງເລຂາກອງທຶນ ປະກອບດ້ວຍ ຫົວໜ້າກອງເລຂາ 1 ຕຳແໜ່ງ, ຮອງຫົວໜ້າກອງເລຂາ 1 ຕຳແໜ່ງ, ແລະ ກຳມະການຈຳນວນໜຶ່ງ ພ້ອມນີ້ຍັງມີ ຫົວໜ້າຫ້ອງການ 1 ຕຳແໜ່ງ, ຮອງຫົວໜ້າຫ້ອງການ 1 ຕຳແໜ່ງ ແລະ ພະນັກງານວິຊາການຈຳນວນໜຶ່ງທີ່ຮັບຜິດຊອບ ວຽກງານບໍລິຫານ, ແຜນການ, ບັນຊີ ແລະ ການເງິນ.

ມາດຕາ 11 ສິດ ແລະ ໜ້າທີ່ຂອງເລຂາກອງທຶນ

11.1 ເປັນເລຂາທິການໃຫ້ແກ່ສະພາບໍລິຫານກອງທຶນ.

11.2 ຄຸ້ມຄອງລະບົບ ບັນຊີ, ຊັບສິນ, ລາຍຮັບ ແລະລາຍຈ່າຍຂອງກອງທຶນ.

11.3 ສັງລວມ ແລະ ຄົ້ນຄ້ວາ ກວດຜ່ານ ບັນດາໂຄງການຕ່າງໆ ເພື່ອ ສະເໜີແຜນການ ນຳໃຊ້ທຶນ ຕໍ່ສະພາບໍລິຫານກອງທຶນ ເພື່ອພິຈາລະນາ ແລະ ຮັບຮອງເອົາ ( ລວມມີ ແຜນການ 5 ປີ, ແຜນ ການປະຈຳປີ )

11.4 ປະສານງານ ແລະ ຈັດຕັ້ງປະຕິບັດໜ້າທີ່ ຕາມການຊີ້ນຳຂອງສະພາບໍລິຫານກອງທຶນ

11.5 ຮ່າງກົດລະບຽບພາຍໃນກ່ຽວກັບ ການເຄື່ອນໄຫວ ຂອງສະພາບໍລິຫານກອງທຶນ, ສ້າງຄູ່ມື, ບົດແນະນຳກ່ຽວກັບການສ້າງໂຄງການ ແລະ ການສ້າງລະບຽບການຄຸ້ມຄອງ ແລະ ນຳໃຊ້ ເງິນກອງທຶນ

11.6 ສະຫຼຸບລາຍງານ ການເຄື່ອນໄຫວວຽກງານ ຂອງກອງທຶນ ປະຈຳເດືອນ, 3 ເດືອນ 6 ເດືອນ ແລະ ສົກປີ

11.7 ສຶກສາ, ຄົ້ນຄວ້າວິທີການ ແລະ ມາດຕະການ ໃນການລະດົມທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອເປັນລາຍຮັບເຂົ້າກອງທຶນ ກພປຊ.

11.8 ໂຄສະນາເຜີຍແຜ່ ກ່ຽວກັບ ຄວາມໝາຍຄວາມສຳຄັນ ຂອງກອງທຶນຕໍ່ວຽກງານ ພັດທະນາ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ບົດບາດຄວາມຮັບຜິດຊອບຂອງກອງທຶນ.

11.9 ຕິດຕາມ ກວດກາ ແລະ ປະເມີນຜົນການນຳໃຊ້ທຶນ ກອງທຶນ ຂອງພາກສ່ວນຕ່າງໆທີ່ໄດ້ ຮັບການອະນຸມັດ.

## ໝວດທີ III

## ແຫລ່ງລາຍຮັບ ແລະ ການຂົນຂວາຍ ສະດົມທຶນ

ມາດຕາ 12 ລາຍຮັບ ຂອງກອງທຶນໄດ້ມາຈາກແຫຼ່ງລາຍຮັບ ຕາມທີ່ກຳນົດໄວ້ ໃນມາດຕາ 12 ຂອງດຳລັດ ສະບັບເລກທີ 38/ນຍ, ລົງວັນທີ 21 ກຸມພາ 2005 ວ່າດ້ວຍ ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ມາດຕາ 13 ການຂົນຂວາຍລະດົມທຶນ ຕ້ອງອີງໃສ່ຄວາມຕື່ນຕົວ ແລະ ສະໝັກໃຈປະກອບສ່ວນ ຂອງພົນລະເມືອງລາວ, ຄົນລາວທີ່ມີພູມລຳເນົາຢູ່ຕ່າງປະເທດ, ຊາວຕ່າງດ້າວ ທີ່ທຳມາຫາກິນຢູ່ ສປປ ລາວ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ອົງການຈັດຕັ້ງສາກົນ ທີ່ບໍ່ແມ່ນຂອງລັດຖະບານ ອົງການຈັດຕັ້ງສັງຄົມພາຍໃນ ແລະ ຕ່າງປະເທດອື່ນໆ.

ມາດຕາ 14. ບຸກຄົນ ຫຼື ນິຕິບຸກຄົນ ທີ່ຕ້ອງການປະກອບທຶນ [illegible] ສາມາດມອບທຶນ ໂດຍກົງໃຫ້ ສະພາບໍລິຫານ ກອງທຶນ ຫຼື ຜ່ານອົງການປົກຄອງທ້ອງຖິ່ນ ຫລື ສະຖານທູດລາວ ຢູ່ປະເທດຕ່າງໆ ສຳລັບການປະກອບທຶນທີ່ເຈາະຈົງໃສ່ເປົ້າໝາຍໃດໜຶ່ງ ຕ້ອງແມ່ນກິດຈະການ ທີ່ນອນຢູ່ໃນແຜນການເຄື່ອນໄຫວຂອງວຽກງານ ກອງທຶນ.

ມາດຕາ 15. ການປະກອບທຶນ: ນອກຈາກໄດ້ລະບຸ ຢູ່ບົດແນະນຳ ສະບັບເລກທີ 0092/ກງ, ລົງວັນທີ 13/1/2009 ແລ້ວ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 03 ປປທ, ລົງວັນທີ 19 ພະຈິກ 2008 ໝວດທີ VIII, ມາດຕາ 70 ຂໍ້ທີ 7. ວ່າດ້ວຍ ຄາບໍລິການ ສຳຫຼວດ, ຄຸ້ມຄອງ ແລະ ພັນທະປູກໄມ້ທົດແທນ ຂອງຂະແໜງປ່າໄມ້ ແລະ ນອກນັ້ນປະກອບທຶນຕາມສັນຍາຂອງໂຄງການພັດທະນາໂຄງຮ່າງຖານຂອງລັດຖະບານເຊັ່ນ: ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ, ໂຄງການຂຸດຄົ້ນແຮ່ທາດ, ການທ່ອງທ່ຽວທຳມະຊາດ ແລະ ໂຄງການອື່ນໆ ທີ່ພົວພັນເຖິງວຽກງານປ່າໄມ້ ແລະ ຊັບພະຍາກອນປ່າໄມ້.

ມາດຕາ 16 ການປະກອບທຶນ ສາມາດປະກອບທຶນ ເປັນເງິນ, ວັດຖຸ ຫລື ແຮງງານ :

16.1 ການປະກອບທຶນເປັນເງິນ ແມ່ນສາມາດໂອນ ຫຼື ມອບເຂົ້າບັນຊີ ຂອງກອງທຶນ ໄດ້ໂດຍກົງ.

16.2 ການປະກອບທຶນເປັນວັດຖຸ ຕ້ອງແມ່ນວັດຖຸທີ່ມີຄຸນນະພາບ ແລະ ສາມາດໃຊ້ໃຫ້ມີຜົນປະໂຫຍດ, ແຕ່ວັດຖຸເຫຼົ່ານັ້ຕ້ອງຄິດໄລ່ເປັນເງິນ ຕາມລາຄາຕົວຈິງໃນທ້ອງຕະຫຼາດໃນເວລາມອບ-ຮັບ

16.3 ການປະກອບທຶນ ເປັນແຮງງານ ແລະ ຊ່ຽວຊານວິຊາການສະເພາະດ້ານ ກໍຕ້ອງໄດ້ຄິດໄລ່ ເປັນມູນຄ່າຕາມແຕ່ລະນີ.

ມາດຕາ 17. ການປະກອບທຶນ ສາມາດມອບເປັນເງິນສົດ ຫຼື ໂອນກໍ່ໄດ້ ໂດຍມອບ ຫຼື ໂອນເຂົ້າບັນຊີ ຂອງກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ການມອບເປັນວັດຖຸຕ້ອງໄດ້ຜ່ານການຈົດທະບຽນ ແລະ ຂຶ້ນບັນຊີ ເປັນຊັບສິນຂອງລັດ, ການປະກອບທຶນດ້ວຍແຮງງານ ແລະ ຊ່ຽວຊານວິຊາການສະເພາະດ້ານ ຕ້ອງໄດ້ມີການຢັ້ງຢືນຮັບຮອງຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ.

## ໝວດທີ IV
## ການຄຸ້ມຄອງ ແລະ ນຳໃຊ້ທຶນ

ມາດຕາ 18. ສະພາບໍລິຫານກອງທຶນ ເປັນຜູ້ຄຸ້ມຄອງກອງທຶນ ໂດຍກົງ ຊຶ່ງມີກອງເລຂາ ກອງທຶນເປັນ ຜູ້ດຳເນີນງານຕາມພາລະບົດບາດ ທີ່ໄດ້ກຳນົດໄວ້ ໃນມາດຕາ 9 , 10 ແລະ 11 ໝວດທີ II ຂອງ ກົດລະບຽບສະບັບນີ້

ມາດຕາ 19. ລາຍຮັບຂອງກອງທຶນຕ້ອງນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວຂອງ ກອງທຶນ ຕໍ່ເປົ້າໝາຍຕ່າງໆ ຕາມທີ່ກຳນົດໄວ້ ໃນມາດຕາທີ 4 ຂອງດຳລັດ 38/ນຍ, ລົງວັນທີ 21 ກຸມພາ 2005 ແລະ ນຳໃຊ້ເຂົ້າໃນການຕິດຕາມ ກວດ ກາ ແລະ ປະເມີນຜົນ ຂອງກອງເລຂາ.

ມາດຕາ 20. ຊັບສິນ ແລະ ລາຍຮັບຂອງກອງທຶນຕ້ອງນຳເຂົ້າໃນການຈັດຕັ້ງປະຕິບັດບັນດາໜ້າທີ່ວຽກງານຕາມຈຸດປະສົງ, ເປົ້າໝາຍ ແລະ ວຽກງານຄຸ້ມຄອງ ບໍລິຫານກອງທຶນ ຕາມລະບຽບການຂອງ ກະຊວງ ການເງິນ.

## ໝວດທີ V

## ການສ້າງແຜນການເຄື່ອນໄຫວ

ມາດຕາ 21. ການສ້າງແຜນນຳໃຊ້ເງິນກອງທຶນ ຕ້ອງໃຫ້ສອດຄ່ອງກັບຍຸດທະສາດ ການພັດທະນາປ່າໄມ້ ແລະ ໃຫ້ຖືກ ຕ້ອງ ຕາມເປົ້າໝາຍ ການນຳໃຊ້ເງິນກອງທຶນ ທີ່ກຳນົດໄວ້ໃນດຳລັດ 38/ນຍ. ລົງວັນທີ 21 ກຸມພາ 2005 ຊຶ່ງເລີ້ມຈາກ ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ ແລະ ຂະແໜງການກ່ຽວຂ້ອງຂອງ ເມືອງແລ້ວນຳສະເໜີຕໍ່ ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງ ເພື່ອໃຫ້ກອງເລຂາ ກອງທຶນສັງລວມ ແລະ ນຳສະເໜີໃຫ້ສະພາບໍລິຫານກອງທຶນພິຈາລະນາ ແລະ ຮັບຮອງເອົາ.

ມາດຕາ 22. ການຂື້ນແຜນນຳໃຊ້ເງິນກອງທຶນ ປະຈຳສົກປີ ຕ້ອງໄດ້ຈັດລຽງບູລິມະສິດ ໃຫ້ແທດເໝາະກັບສະພາບຄວາມເປັນຈິງ ແລະ ຕາມຄວາມອາດສາມາດ ຂອງກອງທຶນ.

## ໝວດທີ VI

## ການເບີກຈ່າຍ, ການຈັດຊື້ ແລະ ການຈັດຈ້າງ

ມາດຕາ 23. ການໃຊ້ຈ່າຍ, ການຈັດຊື້ ພາຫະນະ, ວັດຖຸອຸປະກອນ ກຳນສຳລະສະສາງ, ການປະຊຸມ ແລະ ການຈັດຈ້າງຕ້ອງໄດ້ປະຕິບັດ ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 03/ນຍ ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ ສະບັບເລກທີ 0063/ກງ, ລົງວັນທີ່ 12 ມີນາ 2004 ຊຶ່ງຈະຖືກດຳເນີນການແຕ່ລະຂັ້ນໂດຍ ກອງເລຂາ ກອງທຶນເພື່ອຮັບປະກັນການໃຊ້ຈ່າຍງົບປະມານຕາມຂໍ້ກຳນົດຂອງກະຊວງການເງິນ ແລະ ລະບຽບກົດໝາຍງົບປະມານ, ແລະ ການບັນຊີແຫ່ງລັດທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະ.

ມາດຕາ 24. ການຖອນເງິນຈາກບັນຊີກອງທຶນ ຕ້ອງປະຕິບັດຕາມແຜນການທີ່ໄດ້ ຜ່ານການຮັບຮອງຈາກ ສະພາບໍລິຫານ ແລະ ຕ້ອງຖອນດ້ວຍ "ເຊັກເງິນ" ຂອງກອງເລຂາກອງທຶນ ຫລື ບຸກຄົນທີ່ໄດ້ຮັບການມອບສິດ. ໃນນີ້ຕ້ອງມີບັນຊີ ລາຍຮັບ-ລາຍຈ່າຍ ແຍກຕາມປະເພດເງິນທີ່ມີ ແລະ ຕາມວັດຖຸສິ່ງຂອງທີ່ໄດ້ມາເພື່ອຮັບປະກັນຄວາມໂປ່ງໃສ.

## ໝວດທີ VII

## ລະບົບລາຍງານ, ຕິດຕາມ ກວດກາ ແລະ ປະເມີນຜົນ

ມາດຕາ 25. ກອງເລຂາກອງທຶນ ຕ້ອງຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ແຜນການນຳໃຊ້ງົບປະມານກອງທຶນ ປະຈຳສົກປີ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງ ທີ່ສະພາບໍລິຫານກອງທຶນໄດ້ອະນຸມັດ, ໂດຍໃຫ້ມີການປະເມີນຜົນວິເຄາະວິໄຈບັນຫາລະອຽດ ແລະ ຊອກຫາສາຍເຫດທີ່ຄ້າງຄາໃນການປະຕິບັດວຽກງານ ເພື່ອຊອກວິທີທາງແກ້ໄຂທັງນີ້ກໍເພື່ອເຮັດໃຫ້ແຜນການໄດ້ຖືກຈັດຕັ້ງປະຕິບັດຕາມຈຸດປະສົງ ແລະ ເປົ້າໝາຍທີ່ກຳນົດໄວ້.

ມາດຕາ 26 ສະພາບໍລິຫານ ກອງທຶນ ຕ້ອງລາຍງານ ຜົນການຈັດຕັ້ງປະຕິບັດ ວຽກງານປະຈຳ 3 ເດືອນ, 6 ເດືອນ ແລະ ປະຈຳປີ ໃຫ້ແກ່ ລັດຖະບານ ແລະ ຕອບສະໜອງຂໍ້ມູນ ໃຫ້ຜູ້ປະກອບທຶນ ແລະ ພາກ ສ່ວນຕ່າງໆ ທີ່ກ່ຽວຂ້ອງ ຫາກມີຄວາມຕ້ອງການ

ມາດຕາ 27. ສະພາບໍລິຫານກອງທຶນ ຕ້ອງໄດ້ພິຈາລະນາ ຮັບຮອງ ຜົນການກວດກາ ການນຳໃຊ້ທຶນ ແລະ ວັດຖຸສິ່ງ ຂອງ ແລະ ບັນຊີຕ່າງໆ ທີ່ຖືກກວດສອບໂດຍອົງການ ທີ່ມີສິດອຳນາດລັດ ຂອງລັດ. ໃນກໍລະນີຈຳເປັນສະພາບໍລິຫານມີສິດຈັດຕັ້ງ ແລະ ເຊື້ອເຊີນເອົານັກກວດສອບບັນຊີ ຈາກພາຍນອກມາກວດ ສອບບັນຊີ ຂອງກອງທຶນ, ແນໃສ່ຮັບປະກັນຄວາມໂປ່ງໃສຂາວສະອາດ ຂອງການນຳໃຊ້ງົບປະມານກອງທຶນ ແລະ ສາມາດຕອບສະໜອງຜົນການກວດສອບບັນຊີໄດ້ຢ່າງເໝາະສົມ.

## ໝວດທີ VIII
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 28. ບຸກຄົນ ແລະ ການຈັດຕັ້ງທີ່ປະກອບທຶນເປັນເງິນ, ວັດຖຸ ຫຼື ແຮງງານເຂົ້າໃສ່ກອງທຶນຈະໄດ້ຮັບ ການຍ້ອງຍໍຕາມລະບອບນະໂຍບາຍຂອງລັດຈາກສະພາບໍລິຫານ ຫຼື ລັດຖະບານໂດຍກົງ ຫຼື ຮັບ ຜ່ານອົງການປົກຄອງທ້ອງຖິ່ນ ຫຼື ສະຖານທູດລາວ.

ບຸກຄົນທີ່ໄດ້ປະກອບສ່ວນໃນການປ້ອງກັນ ແລະ ສະກັດກັ້ນການກະທຳທີ່ເປັນການລະເມີດຕໍ່ລະບຽບການຂອງກອງທຶນ ໃນເມື່ອໄດ້ຮັບຜົນເສຍຫາຍ ທາງດ້ານຊັບສິນ ແລະ ຮ່າງກາຍ ຈະໄດ້ຮັບຜົນຕອບແທນຕາມລະບອບ ສະຫວັດດີ-ສັງຄົມ ຂອງລັດ.

ມາດຕາ 29. ບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຕໍ່ກົດລະບຽບສະບັບນີ້ ໃນການນຳໃຊ້ງົບປະມານ ກອງທຶນ ໃນທາງທີ່ບໍ່ຖືກເປົ້າໝາຍ ຈະຖືກປະຕິບັດວິໃນ ດ້ວຍການສຶກສາອົບຮົມ, ປັບໃໝ ແລະ ລົງໂທດຕາມລະບຽບກົດໝາຍ.

## ໝວດທີ IX
## ບົດບັນຍັດສຸດທ້າຍ

ມາດຕາ 30. ສະພາບໍລິຫານ ກອງທຶນມີກາປະທັບ ເພື່ອເຄື່ອນໄຫວຕາມພາລະບົດບາດຂອງຕົນລັກສະນະກາປະທັບຂອງສະພາບໍລິຫານກອງທຶນ ມີດີ:

- ເປັນຮູບວົງມົນ;
- ຂອບເທິງຂຽນວ່າ : ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
- ຂອບລຸ່ມຂຽນວ່າ : ສະພາບໍລິຫານ;
- ໃຈກາງ : ຮູບກາໝາຍຊາດ;

ມາດຕາ 31. ກອງເລຂາກອງທຶນ ມີກາປະທັບ ເພື່ອເຄື່ອນໄຫວຕາມພາລະບົດບາດ ຂອງຕົນລັກສະນະກາປະທັບຂອງສະພາບໍລິຫານກອງທຶນ ມີດີ :

- ເປັນຮູບວົງມົນ ;
- ຂອບເທິງຂຽນວ່າ : ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
- ຂອບລຸ່ມຂຽນວ່າ : ສະພາບໍລິຫານ;
- ໃຈກາງຂຽນວ່າ : ກອງເລຂາ;

ມາດຕາ 32. ທຸກໆເອກະສານ ທີ່ຈະປະທັບກາຂອງສະພາບໍລິຫານກອງທຶນ ຕ້ອງໄດ້ຜ່ານການເຊັນຮັບຮອງຈາກປະທານ. ໃນກໍລະນີ ທີ່ປະທານບໍ່ຢູ່ ຕ້ອງໄດ້ມອບສິດເປັນລາຍລັກອັກສອນໃຫ້ຮອງປະທານ

ມາດຕາ 33. ຜ່ານການຈັດຕັ້ງປະຕິບັດຕົວຈິງຖ້າເຫັນວ່າ ບາງເນື້ອໃນ ຂອງກົດລະບຽບສະບັບນີ້ ບໍ່ສອດຄ່ອງກັບສະພາບຄວາມເປັນຈິງ, ສະພາບໍລິຫານກອງທຶນ ມີໜ້າທີ່ປັບປຸງ, ແກ້ໄຂ ແລະ ອອກກົດລະບຽບສະເພາະ ແລະ ຂໍ້ແນະນຳຕ່າງໆ ທີ່ພົວພັນເຖິງ ພາລະບົດບາດ ຂອງສະພາບໍລິຫານກອງທຶນ.

ມາດຕາ 34. ກົດລະບຽບສະບັບນີ້ ປ່ຽນແທນ ກົດລະບຽບ ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ສະບັບເລກທີ 0264 ກປ. ກພປຊ, ລົງວັນທີ 27 ກັນຍາ 2005.

ມາດຕາ 35. ກົດລະບຽບສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ຊ່ວຍວ່າການ ກະຊວງກະສິກຳ ແລະ ປ່າໄມ້

ປະທານ ສະພາບໍລິຫານ ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ດຣ. ຕີ ພົມມະສັກ